ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ທະນາຄານແຫ່ງ ສປປ ລາວ

ກົມຄຸ້ມຄອງສະຖາບັນການເງິນ

ເລກທີ 155 /ກຄສງ

ນະຄອນຫລວງວຽງຈັນ, ວັນທີ 17 FEB 2012

## ເງື່ອນໄຂ ແລະ ການປະກອບເອກະສານສ້າງຕັ້ງ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ

- ອີງຕາມ ຂໍ້ກຳນົດວ່າດ້ວຍການຄຸ້ມຄອງສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ສະບັບເລກທີ 02/ທຫລ, ລົງວັນທີ 20 ມິຖຸນາ 2008.

ກົມຄຸ້ມຄອງສະຖາບັນການເງິນ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານ ທີ່ສົນໃຈຢາກສ້າງຕັ້ງ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ຈະຕ້ອງປະຕິບັດເງື່ອນໄຂ ແລະ ການປະກອບເອກະສານສ້າງຕັ້ງ ດັ່ງລຸ່ມນີ້:

1. **ເງື່ອນໄຂ**

ບັນດາອົງການຈັດຕັ້ງຂອງລັດ, ອົງກອນຈັດຕັ້ງສາກົນ, ລວມໝູ່ ຫລື ວິສາຫະກິດ ທີ່ໄດ້ດຳເນີນ ຫລື ກຳລັງຈະດຳເນີນການເຄື່ອນໄຫວຄື ຫລື ຄ້າຍຄືກິດຈະກຳການເງິນຈຸລະພາກ ໂດຍບໍ່ຈຳກັດແຕ່: ທະນາຄານບ້ານ, ກຸ່ມທ້ອນເງິນ, ກອງທຶນບ້ານ, ກອງທຶນເພື່ອການພັດທະນາ ແລະ ອື່ນໆ.

2. **ການປະກອບເອກະສານ**

1) ຄຳຮ້ອງ ຕາມແບບຟອມທີ່ ທຫລ ວາງອອກ;
2) ໃບຢັ້ງຢືນຮັບເງິນຈາກ ກົມບໍລິການ ທຫລ ຈຳນວນ 02 ແສນກີບ (ຄ່າບໍລິການ) ຫລື ຕາມການປ່ຽນແປງຂອງ ທຫລ ໃນແຕ່ລະໄລຍະ;
3) ກົດລະບຽບພາຍໃນ ທີ່ສອດຄ່ອງກັບກົດໝາຍ ແລະ ຂໍ້ກຳນົດວາງອອກ;
4) ໃບຄຳໝັ້ນສັນຍາ;
5) ໃບສະຫລຸບຊັບສົມບັດ (ສະຫລຸບຊັບສິນ, ໜີ້ສິນ ແລະ ທຶນ);
6) ແຜນແວດ ແລະ ໃບຢັ້ງຢືນທີ່ຕັ້ງສຳນັກງານ ຈາກອຳນາດການປົກຄອງ;
7) ບົດວິພາກ ຫລື ແຜນການດຳເນີນທຸລະກິດ 05 ປີທຳອິດ;

໘) ກໍລະນີຜູ້ຖືຮຸ້ນເປັນພະນັກງານ ຫລື ເຄີຍເປັນພະນັກງານຢູ່ອົງກອນອື່ນມາກ່ອນ ຕ້ອງປະກອບເອກະສານຢັ້ງຢືນຢ່າງເປັນລາຍລັກອັກສອນ;

໙) ໃບແຕ່ງຕັ້ງມອບກຳມະສິດ ຜູ້ຕາງໜ້າພົວພັນວຽກງານນຳ ທະນາຄານແຫ່ງ ສປປ ລາວ.

**ຫົວໜ້າກົມຄຸ້ມຄອງສະຖາບັນການເງິນ**

ດຣ. ອາຄົມ ປຣະເສີດ